**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫລວງວຽງຈັນ, ວັນທີ 2023

# ຮ່າງ

# ກົດໝາຍ

# ວ່າດ້ວຍການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຕິດຕາມກວດກາການເຄື່ອນໄຫວ ວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາ ສິນຄ້າ ແລະ ຄ່າບໍລິການ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງຜູ້ຊົມໃຊ້, ຜູ້ດໍາເນີນທຸລະກິດ ແລະ ລັດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ມີການຂະຫຍາຍຕົວ ແລະ ໝັ້ນຄົງ.

### ມາດຕາ 2 ການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ

ການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ແມ່ນ ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ມາດຕະການ ທີ່ກໍານົດໄວ້ໃນກົດໝາຍສະບັບນີ້ ຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໂດຍອີງການຄຸ້ມຄອງລາຄາຂອງລັດ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາ ເຮັດໃຫ້ລາຄາມີຄວາມເປັນທໍາ ແລະ ແທດເໝາະກັບ ປະລິມານ, ຄຸນນະພາບ ແລະ ມາດຕະຖານ ຂອງສິນຄ້າ ແລະ ການບໍລິການ.

### ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລາຄາ** ໝາຍເຖິງ ຄ່າຕອບແທນທີ່ເປັນເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດອື່ນ ຈາກການຈໍາໜ່າຍສິນຄ້າ ຫຼື ການບໍລິການ. ລາຄາປະກອບດ້ວຍ ລາຄາທີ່ລັດກໍານົດ, ຄຸ້ມຄອງ ແລະ ລາຄາທີ່ກໍານົດໂດຍຜູ້ດໍາເນີນທຸລະກິດ;

2. **ຄ່າບໍລິການ** ໝາຍເຖິງ ຄ່າຕອບແທນທີ່ເປັນເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຈາກການຮັບໃຊ້ ຫຼື ການໃຫ້ໃຊ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. **ການຮັກສາສະຖຽນລະພາບຂອງລາຄາ** ໝາຍເຖິງ ການນໍາໃຊ້ວິທີການຈັດຕັ້ງປະຕິບັດມາດຕະການທີ່ເໝາະສົມຂອງລັດ ເພື່ອເຮັດໃຫ້ການສະໜອງ ແລະ ຄວາມຕ້ອງການ, ການເງິນ, ເງິນຕາມີຄວາມເທົ່າທຽມກັນ ແລະ ວິທີອື່ນທີ່ຈໍາເປັນ ກ່ຽວກັບ ເສດຖະກິດ, ບໍລິຫານຂອງລັດ ທີ່ສົ່ງຜົນກະທົບຕໍ່ການສ້າງ ແລະ ການເຄື່ອນໄຫວຂອງລາຄາ ບໍ່ໃຫ້ລາຄາຂຶ້ນສູງ ຫຼື ຫຼຸດລົງຕໍ່າເກີນໄປ.

4. **ການກໍານົດລາຄາ** ໝາຍເຖິງ ມູນຄ່າສິນຄ້າ ຫຼື ຄ່າບໍລິການ ທີ່ຕ້ອງຊໍາລະ ຈາກການຊື້ສິນຄ້າ ຫຼື ໃຊ້ບໍລິການ ຊຶ່ງກໍານົດໂດຍອົງການຈັດຕັ້ງລັດທີ່ມີສິດ ຫຼື ບຸກຄົນ, ນິຕິບຸກຄົນ ທີ່ດໍາເນີນການຜະລິດ, ດໍາເນີນທຸລະກິດ ກໍານົດລາຄາ ສິນຄ້າ ແລະ ຄ່າບໍລິການ;

5. **ລາຄາສູງສຸດ** ໝາຍເຖິງ ລາຄາສູງສຸດຂອງສິນຄ້າ ຫຼື ການບໍລິການ ທີ່ຜູ້ດໍາເນີນທຸລະກິດ ສາມາດໃຫ້ການຈໍາໜ່າຍ ຫຼື ການບໍລິການ;

6. **ລາຄາຕໍ່າສຸດ** ໝາຍເຖິງ ລາຄາຕໍ່າສຸດຂອງສິນຄ້າ ຫຼື ການບໍລິການ ທີ່ຜູ້ດໍາເນີນທຸລະກິດສາມາດເກັບຊື້ສິນຄ້າ ຫຼື ການບໍລິການ;

7. **ຂອບເຂດລາຄາ** ໝາຍເຖິງ ລາຄາຂອງສິນຄ້າ ຫຼື ການບໍລິການ ທີ່ຜູ້ດໍາເນີນທຸລະກິດສາມາດໃຫ້ການຈໍາໜ່າຍ ຫຼື ການບໍລິການ ຈາກລະດັບຕໍ່າສຸດ ຫາ ສູງສຸດໃດໜຶ່ງ;

8. **ການປ່ຽນແປງຂອງລາຄາຜິດປົກກະຕິ** ໝາຍເຖິງ ລາຄາສິນຄ້າ ແລະ ການບໍລິການ ທີ່ເພີ່ມຂຶ້ນສູງເກີນໄປ ຫຼື ຫຼຸດລົງ ຢ່າງບໍ່ສົມເຫດສົມຜົນ ເມື່ອປັດໄຈອົງປະກອບໂຄງປະກອບລາຄາ ບໍ່ມີການປ່ຽນແປງຢ່າງຫຼວງຫຼາຍ ຫຼື ໃນກໍລະນີເກີດວິກິດການເສດຖະກິດ, ໄພພິບັດທໍາມະຊາດ, ໄຟໄໝ້ ແລະ ການແຜ່ລະບາດຂອງພະຍາດ.

9. **ຜູ້ດໍາເນີນທຸລະກິດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ຜະລິດ, ຈໍາໜ່າຍ, ຊື້ ເພື່ອການຈໍາໜ່າຍ ຫຼື ນໍາເຂົ້າ ເພື່ອການຈໍາໜ່າຍ ຫຼື ການບໍລິການຢູ່ໃນຂອບເຂດດິນແດນຂອງ ສປປ ລາວ;

10. **ການຜະລິດ** ໝາຍເຖິງ ການເຮັດ, ການປະສົມ, ການປຸງແຕ່ງ, ການປະກອບ, ການປະດິດ, ການປ່ຽນສະພາບ, ການປ່ຽນຮູບ, ການດັດແປງ, ການຄັດເລືອກ, ການແບ່ງບັນຈຸ, ການລວມບັນຈຸ ຫຼື ການເຮັດອັນໃດອັນໜຶ່ງໃຫ້ມີຂຶ້ນເປັນສິນຄ້າ ບໍ່ວ່າດ້ວຍວິທີໃດ ລວມທັງການເຮັດໃຫ້ມີຂຶ້ນເປັນຊື່ທາງການຄ້າ ຫຼື ເຄື່ອງ ໝາຍການຄ້າສໍາລັບສິນຄ້ານັ້ນ ບໍ່ວ່າຈະເຮັດເອງ ຫຼື ໃຫ້ຜູ້ອື່ນເຮັດໃຫ້ກໍຕາມ;

11. **ຕົ້ນທຶນການຜະລິດ** ໝາຍເຖິງ ຄ່າໃຊ້ຈ່າຍຕ່າງໆ ທີ່ຜູ້ຜະລິດໄດ້ຈ່າຍອອກໄປ ເພື່ອໃຫ້ໄດ້ຈຳນວນສິນຄ້າທີ່ຕ້ອງການ ຫຼື ຄ່າໃຊ້ຈ່າຍ ທີ່ເຮັດໃຫ້ມູນຄ່າຂອງສິນຄ້າເພີ່ມຂຶ້ນ.

12. **ການຈຳໜ່າຍ** ໝາຍເຖິງ ການຂາຍ, ການແລກປ່ຽນ, ການເອົາໃຫ້, ການແຈກຢາຍ ຫຼື ການໂອນສິດການຄອບຄອງສິນຄ້າ ໃຫ້ແກ່ບຸກຄົນອື່ນ;

13. **ສິນຄ້າ** ໝາຍເຖິງ ວັດຖຸສິ່ງຂອງ ທີ່ໃຊ້ໃນການອຸປະໂພກ ຫຼື ບໍລິໂພກ ທີ່ສາມາດແລກປ່ຽນ, ຊື້-ຂາຍໃນທ້ອງຕະຫຼາດ, ລວມທັງເອກະສານສະແດງສິດ ໃນວັດຖຸສິ່ງຂອງ;

14. **ການບໍລິການ** ໝາຍເຖິງ ສິນຄ້າທີ່ບໍ່ມີຕົວຕົນຜ່ານການຮັບໃຊ້, ການໃຫ້ໃຊ້, ການໃຫ້ປະໂຫຍດໃນຊັບສິນໂດຍມີຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ;

15. **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນຫຼືການຈັດຕັ້ງທີ່ຊື້ ແລະ ນຳໃຊ້ສິນຄ້າແລະການບໍລິການຢ່າງຖືກຕ້ອງຕາມກົດໝາຍໂດຍບໍ່ມີຈຸດປະສົງທາງການຄ້າຢູ່ໃນຂອບເຂດດິນແດນຂອງສປປລາວ;

16. **ລາຍການຄຸ້ມຄອງລາຄາ** ໝາຍເຖິງ ລາຍການຂອງສິນຄ້າ ແລະ ການບໍລິການ ທີ່ອີງການຄຸ້ມຄອງລາຄາຂອງລັດ ກຳນົດຂຶ້ນໃນແຕ່ລະໄລຍະ ເພື່ອນຳໃຊ້ມາດຕະການຄວບຄຸມລາຄາ;

17. **ລາຍການຕິດຕາມການປ່ຽນແປງຂອງລາຄາ** ໝາຍເຖິງ ລາຍການຂອງສິນຄ້າ ແລະ ການບໍລິການທີ່ອີງການຄຸ້ມຄອງລາຄາກຳນົດຂຶ້ນໃນແຕ່ລະໄລຍະ ເພື່ອຕິດຕາມການເໜັງຕີງຂອງລາຄາ;

18. **ການຖົມຊຸມ** ໝາຍເຖິງ ການຊ່ວຍເຫຼືອຈາກລັດ ໃຫ້ແກ່ຜູ້ດຳເນີນທຸລະກິດ ຫຼື ຜູ້ຊົມໃຊ້ ໂດຍທາງກົງ ຫຼື ທາງອ້ອມ ທີ່ມີຜົນຕໍ່ລະດັບລາຄາ ເພື່ອເປົ້າໝາຍການຄຸ້ມຄອງລາຄາ.

19. **ຄັງແຮສຳຮອງ** ໝາຍເຖິງ ຄັງ ຫຼື ສາງ ທີ່ສ້າງຂຶ້ນ ເພື່ອເກັບແຮສິນຄ້າ ທີ່ຢູ່ໃນລາຍການຄວບຄຸມລາຄາ;

20. **ສິນຄ້າ ແລະ ການບໍລິການທີ່ຈຳເປັນ** ໝາຍເຖິງ ສິນຄ້າ ແລະ ການບໍລິການ ທີ່ຂາດບໍ່ໄດ້ໃນການຜະລິດ, ການດຳລົງຊີວິດ, ປ້ອງກັນປະເທດ ແລະ ປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພ ເຊັ່ນ: ວັດຖຸດິບ, ນ້ຳມັນເຊື້ອໄຟ, ວັດຖຸອຸປະກອນ ແລະ ການບໍລິການຕົ້ນຕໍ ໃນການຜະລິດສິ່ງອອກ ແລະ ການໝູນວຽນ.

21. **ລາຍການຄວບຄຸມລາຄາ** ໝາຍເຖິງ ລາຍການຂອງສິນຄ້າ ແລະ ການບໍລິການ ທີ່ອີງການຄຸ້ມຄອງລາຄາ ກຳນົດຂຶ້ນໃນແຕ່ລະໄລຍະ ເພື່ອນຳໃຊ້ມາດຕະການຄວບຄຸມລາຄາ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດ ໃຫ້ຄວາມສຳຄັນແກ່ ວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ເພື່ອຮັບປະກັນໃຫ້ແກ່ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຜູ້ຊົມໃຊ້, ຜູ້ດຳເນີນທຸລະກິດ ແລະ ລັດ;

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດປະກອບສ່ວນເຂົ້າໃນການພັດທະນາ ວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໃຫ້ມີຄວາມເຂັ້ມແຂງ, ເປັນທຳ, ທັນສະໄໝ, ສີຂຽວ ແລະ ຍືນຍົງ.

**ມາດຕາ 5 ຫຼັກການ**

ການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ຕ້ອງປະຕິບັດຕາມຫຼັກການ ດັ່ງລຸ່ມນີ້:

1. ຮັບປະກັນຄວາມສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;

2. ຮັບປະກັນສິດ ແລະ ຜົນປະໂຫຍດ ຂອງຜູ້ຊົມໃຊ້, ຜູ້ດຳເນີນທຸລະກິດ ແລະ ລັດ;

3. ລາຄາສິນຄ້າ ແລະ ຄ່າບໍລິການ ທີ່ລັດຄຸ້ມຄອງ ຖືກກຳນົດໄປຕາມກົນໄກຕະຫຼາດ ທີ່ມີການດັດສົມຂອງລັດ;

4. ລັດ ເຄົາລົບສິດໃນການກຳນົດ, ການແຂ່ງຂັນດ້ານລາຄາ ສິນຄ້າ ແລະ ຄ່າບໍລິການ ຂອງຜູ້ດຳເນີນທຸລະກິດຕາມລະບຽບກົດໝາຍ;

5. ລັດ ນຳໃຊ້ມາດຕະການໃນການຄວບຄຸມລາຄາ ຕາມຄວາມຈຳເປັນບົນພື້ນຖານຫຼັກການ ແລະ ວິທີການ ທີ່ສອດຄ່ອງສົມທົບກັບຫຼັກການເສດຖະກິດຕະຫຼາດ ໂດຍບໍ່ຈຳແນກປະຕິບັດ ແລະ ໂປ່ງໃສ;

6. ປະກອບສ່ວນຮັບປະກັນທາງດ້ານສັງຄົມ ແລະ ສະຖຽນລະພາບ ຂອງເສດຖະກິດມະຫາພາກ.

**ມາດຕາ 6 ຂອບເຂດການນຳໃຊ້**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ ແລະ ຕິດພັນກັບລາຄາ ສິນຄ້າ ແລະ ຄ່າບໍລິການ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ, ຂ່າວສານ, ເຕັກນິກ, ວິທີການ, ພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ການຄຸ້ມຄອງລາຄາ
## ໝວດທີ 1
## ການກຳນົດລາຍການຄວບຄຸມລາຄາ

**ມາດຕາ 8 ການກຳນົດລາຍການຄວບຄຸມລາຄາ**

ການກຳນົດລາຍການຄວບຄຸມລາຄາ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ອົງການຄຸ້ມຄອງລາຄາ ຄົ້ນຄວ້າ, ວິໄຈ ແລະ ກຳນົດ ສິນຄ້າ ແລະ ການບໍລິການ ເຂົ້າໃນລາຍການຕິດຕາມການເໜັງຕີງຂອງລາຄາ ແລະ ລາຍການຄວບຄຸມລາຄາຂອງຕົນ ເພື່ອສົ່ງໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ;

2. ຂະແໜງອຸດສາຫະກຳ ແລະ ການຄ້າ ສັງລວມ ແລະ ລາຍງານ ຫົວໜ້າຄະນະຊີ້ນຳວຽກງານຄຸ້ມຄອງລາຄາ ເພື່ອພິຈາລະນາ;

3. ພາຍຫຼັງຫົວໜ້າຄະນະຊີ້ນຳວຽກງານຄຸ້ມຄອງລາຄາ ພິຈາລະນາຕົກລົງເຫັນດີແລ້ວ, ຫົວໜ້າຄະນະຊີ້ນຳວຽກງານຄຸ້ມຄອງລາຄາ ອອກຂໍ້ຕົກລົງຮັບຮອງ ແລະ ປະກາດໃຊ້.

**ມາດຕາ 9 ຮູບແບບການຄຸ້ມຄອງລາຄາ**

ຮູບແບບການຄຸ້ມຄອງລາຄາ ປະກອບມີ ສອງຮູບແບບ ດັ່ງນີ້:

1. ການຄວບຄຸມລາຄາ;
2. ການຕິດຕາມການປ່ຽນແປງຂອງລາຄາ.

**ມາດຕາ 10 ການຄວບຄຸມລາຄາ**

ການຄວບຄຸມລາຄາ ແມ່ນ ການນຳໃຊ້ບັນດາຫຼັກການ, ວິທີການ ແລະ ມາດຕະການຕ່າງໆ ຢ່າງຮອບດ້ານ ຕໍ່ກັບສິນຄ້າ ແລະ ການບໍລິການ ຄວບຄຸມລາຄາ ເປັນຕົ້ນ ການກຳນົດລາຄາຊື້, ລາຄາຈຳໜ່າຍ ຫຼື ການກຳນົດເງື່ອນໄຂ ແລະ ວິທີຈັດຕັ້ງປະຕິບັດທາງການຄ້າ ທີ່ບໍ່ເປັນທຳ ເພື່ອຄວບຄຸມລາຄາ ເຮັດໃຫ້ລາຄາມີຄວາມສະຖຽນລະພາບ ຊຶ່ງເປັນເປົ້າໝາຍສຳຄັນ ຂອງນະໂຍບາຍເສດຖະກິດມະຫາພາກ ຂອງລັດ.

**ມາດຕາ 11 ການຕິດຕາມການເໜັງຕີງຂອງລາຄາ**

ການຕິດຕາມການເໜັງຕີງຂອງລາຄາ ແມ່ນ ການເກັບກຳຂໍ້ມູນທາງດ້ານລາຄາ ສິນຄ້າ ແລະ ຄ່າບໍລິການ ທີ່ມີຄວາມອ່ອນໄຫວງ່າຍ ແລະ ກະທົບໄວຕໍ່ກັບການດຳລົງຊີວິດຂອງປະຊາຊົນ ຢູ່ຕາມທ້ອງຕະຫຼາດ ໂດຍອີງການຄຸ້ມຄອງລາຄາຂອງລັດ ເພື່ອເປັນຂໍ້ມູນປະກອບເຂົ້າໃນການຄົ້ນຄວ້າ, ວິເຄາະ ວິໄຈ ໃຫ້ແກ່ການກຳນົດລາຍການສິນຄ້າ ແລະ ການບໍລິການ ຄວບຄຸມລາຄາ, ກຳນົດລະບຽບການ ແລະ ການຈັດຕັ້ງປະຕິບັດມາດຕະການຄວບຄຸມລາຄາ.

ການຕິດຕາມການເໜັງຕີງຂອງລາຄາ ຕ້ອງດຳເນີນການຕິດຕາມ ການຕິດປ້າຍລາຄາ, ການປະກາດ ແລະ ການຊຳລະ ເປັນເງິນຕາຕ່າງປະເທດ ຂອງຜູ້ດຳເນີນທຸລະກິດ.

## ໝວດທີ 2
## ມາດຕະການຄວບຄຸມລາຄາ

**ມາດຕາ 12 ມາດຕະການຄວບຄຸມລາຄາ**

ມາດຕະການຄວບຄຸມລາຄາ ປະກອບດ້ວຍບັນດາມາດຕະການ ດັ່ງນີ້:

1. ການກຳນົດໂຄງປະກອບລາຄາ;
2. ການດັດສົມການສະໜອງ ແລະ ຄວາມຕ້ອງການ;
3. ກຳນົດລາຄາສູງສຸດ, ລາຄາຕໍ່າສຸດ ຫຼື ຂອບເຂດລາຄາ;
4. ການຖົມຊຸມ.

ການນຳໃຊ້ມາດຕະການຄວບຄຸມລາຄາ ແມ່ນ ສາມາດນຳໃຊ້ໜຶ່ງ ຫຼື ຫຼາຍມາດຕະການ ຕາມແຕ່ລະກໍລະນີ ແລະ ຕ້ອງມີການກຳນົດຂອບເຂດໄລຍະເວລາ ໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ.

**ມາດຕາ 13 ການກຳນົດໂຄງປະກອບລາຄາ**

ຜູ້ດຳເນີນທຸລະກິດ ຕ້ອງສົ່ງໂຄງປະກອບລາຄາ ສຳລັບລາຍການສິນຄ້າ ແລະ ການບໍລິການ ທີ່ລັດຄຸ້ມຄອງລາຄາ ໃຫ້ອົງການຄຸ້ມຄອງລາຄາ ພິຈາລະນາກ່ອນການນຳໃຊ້ໂຄງປະກອບລາຄາດັ່ງກ່າວ ໃນການຈຳໜ່າຍ ຫຼື ໃຫ້ການບໍລິການ ຊຶ່ງໂຄງປະກອບລາຄາ ປະກອບດ້ວຍ: ຕົ້ນທຶນຜະລິດ ຫຼື ຕົ້ນທຶນການຊື້, ຕົ້ນທຶນຄ່າບໍລິການ, ຕົ້ນທຶນການຈໍລະຈອນ, ລາຄາຈຳໜ່າຍ ແລະ ຜົນກຳໄລຕົວຈິງ ຂອງສິນຄ້າ ຫຼື ການບໍລິການ.

ໃນກໍລະນີ ທີ່ເຫັນວ່າບັນດາປັດໄຈໂຄງປະກອບລາຄາ ຫາກມີຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນອົງການຄຸ້ມຄອງລາຄາ ຕ້ອງຮຽກເອົາຂໍ້ມູນເພີ່ມຕື່ມ ຈາກຜູ້ດຳເນີນທຸລະກິດ ຫຼື ລົງດຳເນີນການກວດກາຕົວຈິງ.

**ມາດຕາ 14 ການດັດສົມການສະໜອງ ແລະ ຄວາມຕ້ອງການ**

ການດັດສົມການສະໜອງ ແລະ ຄວາມຕ້ອງການ ແມ່ນ ການດຸນດ່ຽງສິນຄ້າ ທີ່ຜະລິດຢູ່ພາຍໃນ, ສິນຄ້າສົ່ງອອກ ແລະ ສິນຄ້ານຳເຂົ້າ; ສິນຄ້າລະຫວ່າງບັນດາເຂດທ້ອງຖິ່ນ ພາຍໃນປະເທດ ໂດຍຜ່ານການຈັດຕັ້ງຈໍລະຈອນສິນຄ້າ; ຊື້ເຂົ້າມາແຮໄວ້ ຫຼື ຂາຍສິນຄ້າ ໃນຄັງແຮສຳຮອງ, ສິນຄ້າແຮສະສົມຈໍລະຈອນ.

**ມາດຕາ 15 ກຳນົດລາຄາສູງສຸດ, ລາຄາຕໍ່າສຸດ ຫຼື ຂອບເຂດລາຄາ**

ກຳນົດລາຄາສູງສຸດ, ລາຄາຕໍ່າສຸດ ຫຼື ຂອບເຂດລາຄາສຳລັບລາຍການສິນຄ້າ ແລະ ການບໍລິການ ທີ່ລັດຄຸ້ມຄອງລາຄາ ໃຫ້ແທດເໝາະກັບຄຸນລັກສະນະສະເພາະ ຂອງແຕ່ລະສິນຄ້າ, ການບໍລິການ ໂດຍອີງໃສ່ພື້ນຖານ ດັ່ງນີ້:

1. ໂຄງປະກອບລາຄາ.
2. ຄວາມຕ້ອງການ ແລະ ການສະໜອງ.
3. ກຳລັງການຊື້ພາຍໃນປະເທດ.
4. ລາຄາຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ.
5. ນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 16 ການຖົມຊຸມ**

ລັດຖະບານ ພິຈາລະນາ ສ້າງກອງທຶນ ຫຼື ຄັງແຮສຳຮອງ ສຳລັບລາຍການຄວບຄຸມລາຄາ ເພື່ອຖົມຊຸມທາງດ້ານປະລິມານ ຫຼື ແຊກແຊງລາຄາ ແນໃສ່ຊ່ວຍໜູນໃຫ້ລາຄາ ມີຄວາມສະຖຽນລະພາບ ແລະ ນຳໃຊ້ໃນເວລາລາຄາ ສິນຄ້າ ຫຼື ການບໍລິການນັ້ນ ມີການເໜັງຕີງຜິດປົກກະຕິ ຫຼື ກະທົບທາງລົບ ຕໍ່ພື້ນຖານເສດຖະກິດ-ສັງຄົມ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ.

ອົງການຄຸ້ມຄອງລາຄາ ສາມາດກຳນົດໃຫ້ຜູ້ດຳເນີນທຸລະກິດ ສ້າງຄັງແຮງສຳຮອງ ສຳລັບລາຍການຄວບຄຸມລາຄາ ແລະ ສາມາດ ເພີ່ມ ຫຼື ຫຼຸດປະລິມານສິນຄ້າໃນຄັງແຮສຳຮອງ ເພື່ອປ້ອງກັນການກັກຕຸນສິນຄ້າ ຫຼື ການປັ່ນປ່ວນລາຄາ.

ຜູ້ດຳເນີນທຸລະກິດ ຕ້ອງລາຍງານ ທີ່ຕັ້ງ, ປະລິມານ ແລະ ການເພີ່ມ ຫຼື ຫຼຸດປະລິມານຂອງຄັງແຮສຳຮອງຂອງຕົນ ໃຫ້ອົງການຄຸ້ມຄອງລາຄາຊາບ.

## ພາກທີ III

### ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ

**ມາດຕາ 17 ສິດຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ມີສິດ ດັ່ງນີ້:

1. ກຳນົດລາຄາບົນພື້ນຖານກົນໄກຂອງຕະຫຼາດ ຍົກເວັ້ນສິນຄ້າ ແລະ ການບໍລິການ ທີ່ນອນໃນລາຍການຄວບຄຸມລາຄາ;

2. ສະເໜີ ຫຼື ຮ້ອງຟ້ອງ ພະນັກງານ ຫຼື ເຈົ້າໜ້າທີ່ ກ່ຽວກັບການປະຕິບັດງານ ເມື່ອເຫັນວ່າມີພຶດຕິກຳທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

3. ນຳໃຊ້ສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18 ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ມີພັນທະ ດັ່ງນີ້:

1. ແຈ້ງໂຄງປະກອບລາຄາ ສຳລັບລາຍການຄວບຄຸມລາຄາ ໃຫ້ອົງການຄຸ້ມຄອງລາຄາທີ່ກ່ຽວຂ້ອງຊາບ ກ່ອນການປັບຂຶ້ນລາຄາ;

2. ສະໜອງຂໍ້ມູນທີ່ເປັນຈິງ, ຖືກຕ້ອງ ແລະ ຄົບຖ້ວນ ຕໍ່ກັບພະນັກງານ, ເຈົ້າໜ້າທີ່ ຫຼື ອົງການຄຸ້ມຄອງລາຄາ;

3. ສົ່ງບົດລາຍງານການເງິນ ທຸກໆໄຕມາດ, ຫົກເດືອນ ແລະ ໜຶ່ງປີ ສຳລັບລາຍການຄວບຄຸມລາຄາໃຫ້ອົງການຄຸ້ມຄອງລາຄາ ທີ່ກ່ຽວຂ້ອງ;

4. ປະຕິບັດຕາມມາດຕະການຄວບຄຸມລາຄາ ທີ່ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ທີ່ອົງການຄຸ້ມຄອງລາຄານຳໃຊ້ ໃນແຕ່ລະໄລຍະ;

5. ສະແດງ, ຕິດ, ປະກາດ ຫຼື ໂຄສະນາ ລາຄາເປັນເງິນກີບ ບໍ່ວ່າສິນຄ້າ ຫຼື ການບໍລິການນັ້ນ ຈະນອນໃນລາຍການຄວບຄຸມລາຄາ ຫຼື ບໍ່ກໍຕາມ. ປ້າຍລາຄາ ສິນຄ້າ ແລະ ຄ່າບໍລິການດັ່ງກ່າວ ຕ້ອງຕິດຢູ່ໃນຮ້ານຄ້າ, ສະຖານທີ່ຄ້າຂາຍສິນຄ້າ ຫຼື ສະຖານທີ່ໃຫ້ການບໍລິການຂອງຕົນ. ການຕິດປ້າຍລາຄາຕ້ອງຈະແຈ້ງ ບໍ່ສ້າງຄວາມສັບສົນໃຫ້ແກ່ຜູ້ຊົມໃຊ້;

6. ຕ້ອງໃຫ້ຄວາມຮ່ວມມື ແກ່ການປະຕິບັດໜ້າທີ່ ຂອງພະນັກງານ ຫຼື ເຈົ້າໜ້າທີ່;

7. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ IV
## ຂໍ້ຫ້າມ

### ມາດຕາ 19 ຂໍ້ຫ້າມ ສໍາລັບພະນັກງານ ຫຼື ເຈົ້າໜ້າທີ່

ຫ້າມ ພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ອໍານາດ, ຕໍາແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ.

2. ສວຍໃຊ້ອໍານາດເກີນຂອບເຂດ ທີ່ເປັນການບັງຄັບ ແລະ ນາບຂູ່ ເຊັ່ນ: ໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ທໍລະມານ, ໃຊ້ການກະທໍາ ແລະ ວາຈາທີ່ຫຍາບຊ້າ.

3. ປະລະໜ້າທີ່ ແລະ ລົບຫຼີກການເຄື່ອນໄຫວວຽກງານ.

4. ເມີນເສີຍ, ປະໝາດ, ຂາດຄວາມຮັບຜິດຊອບ, ບິດເບືອນຄວາມຈິງ.

5. ປົດບັງ, ປົກປ້ອງ, ເຊື່ອງອໍາ ແລະ ໃຫ້ຄວາມຮ່ວມມືແກ່ ຜູ້ກະທໍາຄວາມຜິດ ເພື່ອຮັບສິນບົນ ຫຼື ຜົນປະໂຫຍດອື່ນ.

6. ເປີດເຜີຍຄວາມລັບ ທີ່ໄດ້ຈາກຜູ້ດໍາເນີນທຸລະກິດ ນອກເໜືອຈາກເປົ້າໝາຍການຄຸ້ມຄອງລາຄາ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ດໍາເນີນທຸລະກິດທີ່ກ່ຽວຂ້ອງ.

7. ມີພຶດຕິກໍາອື່ນ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 20 ຂໍ້ຫ້າມ ສໍາລັບຜູ້ດໍາເນີນທຸລະກິດ

ຫ້າມ ຜູ້ດໍາເນີນທຸລະກິດ ມີພຶດຕິກໍາ ດັ່ງນີ້:

1. ມີພຶດຕິກໍາ ໂດຍເຈດຕະນາ ຊຶ່ງເຮັດໃຫ້ລາຄາຕໍ່າ ຫຼື ສູງເກີນຄວນ ຫຼື ເຮັດໃຫ້ເກີດຄວາມ ປັ່ນປ່ວນໃນສັງຄົມ;

2. ສະແດງ, ຕິດ, ປະກາດ ຫຼື ໂຄສະນາ ລາຄາ ສິນຄ້າ ແລະ ຄ່າບໍລິການ ເປັນເງິນຕາຕ່າງປະເທດ;

3. ສວຍໂອກາດຂຶ້ນລາຄາ ໃນເວລາທີ່ເກີດເຫດໄພພິບັດ, ໄພແຫ້ງແລ້ງ, ໄພນໍ້າຖ້ວມ ຫຼື ໃນເວລາທີ່ມີສະພາບການຫຍຸ້ງຍາກເກີດຂຶ້ນ ໃນທ້ອງຖິ່ນໃດໜຶ່ງ;

4. ກັກຕຸນສິນຄ້າ ທີ່ນອນໃນລາຍການຄວບຄຸມລາຄາ ໂດຍມີສິນຄ້າດັ່ງກ່າວໄວ້ໃນຄອບຄອງ ເກີນປະລິມານ ທີ່ອົງການຄຸ້ມຄອງລາຄາໄດ້ກໍານົດໄວ້;

5. ເກັບມ້ຽນສິນຄ້າໄວ້ໃນຄັງແຮສໍາຮອງອື່ນ ນອກຈາກຄັງແຮສໍາຮອງ ທີ່ໄດ້ລາຍງານຕໍ່ອົງການຄຸ້ມຄອງລາຄາ;

6. ນໍາເອົາສິນຄ້າ ທີ່ຢູ່ໃນລາຍການຄວບຄຸມລາຄາ ທີ່ມີໄວ້ນັ້ນອອກຈໍາໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງລາຄາ;

7. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈໍາໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນ ເມື່ອມີຄໍາສັ່ງຈາກອົງການຄຸ້ມຄອງລາຄາ.

8. ມີພຶດຕິອື່ນ ທີ່ເປັນເປັນລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງລາຄາ.

## ພາກທີ V

## ການຄຸ້ມຄອງ ແລະ ການກວດກາ ວຽກງານຄຸ້ມຄອງລາຄາ

### ໝວດທີ 1

### ການຄຸ້ມຄອງວຽກງານລາຄາ

**ມາດຕາ 21 ອົງການຄຸ້ມຄອງລາຄາ**

ລັດຖະບານ ເປັນຜູ້ຄຸ້ມຄອງ ວຽກງານລາຄາ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບລົງເລິກ ຕາມລາຍການ ຄວບຄຸມລາຄາ ແລະ ຕິດຕາມການເໜັງຕີງລາຄາຂອງຕົນ ແຕ່ຂອດຕົ້ນທຶນການຜະລິດ-ຊື້ ສິນຄ້າ, ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ທັງເປັນໃຈກາງປະສານສົມທົບກັບ ຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງສາທາລະນະສຸກ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງສຶກສາທິການ ແລະ ກິລາ, ຂະແໜງພະລັງງານ ແລະ ບໍ່ແຮ່, ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງເຕັກໂນໂລຊີ ແລະ ການສື່ສານ, ຂະແໜງການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ຕາມພາລະບົດບາດ ຂອງຕົນ.

ອົງການຄຸ້ມຄອງວຽກງານລາຄາ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
3. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ດຳເນີນໄປຢ່າງມີປະສິດທິພາບນັ້ນ ໄດ້ສ້າງຕັ້ງຄະນະຊີ້ນຳ ເພື່ອຄວບຄຸມລາຄາຂຶ້ນ ໂດຍແມ່ນ ທ່ານ ຮອງນາຍົກລັດຖະມົນຕີ ເປັນຫົວໜ້າຄະນະຊີ້ນຳ, ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງຫົວໜ້າຄະນະ ແລະ ມີບັນດາຮອງລັດຖະມົນຕີຂະແໜງການ, ອົງການປົກຄອງທ້ອງຖິ່ນ ປະກອບເປັນຄະນະຊີ້ນຳ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຊີ້ນຳວຽກງານ ການຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ການຄຸ້ມຄອງວຽກງານລາຄາ, ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

4. ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ໃນສາຍຕັ້ງຂອງຕົນ;

5. ຄົ້ນຄວ້າ ແລະ ກຳນົດ ລາຍການຄວບຄຸມລາຄາ ແລະ ລາຍການຕິດຕາມການເໜັງຕີງລາຄາ ໃນແຕ່ລະໄລຍະ ຂອງຕົນ;

6. ກຳນົດ, ກວດກາ ແລະ ພິຈາລະນາຮັບຮອງ ໂຄງປະກອບລາຄາ ລາຍການຄວບຄຸມລາຄາ ໃນຂະແໜງການຂອງຕົນ;

7. ກຳນົດລາຄາ ແລະ ປະກາດລາຄາ ຊື້-ຂາຍ ໃນຂອດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;

8. ຄົ້ນຄວ້າ, ວິເຄາະ, ວິໄຈ, ຕິດຕາມກວດກາ ການເໜັງຕີງລາຄາ ສິນຄ້າ ແລະ ຄ່າບໍລິການ;

9. ຮັບພິຈາລະນາ ແກ້ໄຂຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

10. ຕິດຕາມ, ກວດກາ ສະຖານທີ່, ຕຶກອາຄານ ທີ່ມີສ່ວນພົວພັນກັບ ການຜະລິດ, ການປຸງແຕ່ງ, ສາງເກັບມ້ຽນ, ສະຖານທີ່ຈຳໜ່າຍ ແລະ ສະຖານທີ່ບໍລິການ;

11. ນຳໃຊ້ມາດຕະການທາງບໍລິການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

12. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຊີ້ນຳ-ນຳພາ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລາຄາ ໃນຂອບເຂດທົ່ວປະເທດ;

13. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ການຄຸ້ມຄອງວຽກງານລາຄາ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

2. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ໃນຂັ້ນຂອງຕົນຄຸ້ມຄອງ;

3. ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ໃນຂັ້ນຂອງຕົນຄຸ້ມຄອງ;

4. ຄົ້ນຄວ້າ ແລະ ກຳນົດ ລາຍການຄວບຄຸມລາຄາ ແລະ ລາຍການຕິດຕາມການເໜັງຕີງລາຄາ ໃນແຕ່ລະໄລຍະ ໃນຂັ້ນຂອງຕົນຄຸ້ມຄອງ;

5. ກຳນົດ, ກວດກາ ແລະ ພິຈາລະນາຮັບຮອງ ໂຄງປະກອບລາຄາ ລາຍການຄວບຄຸມລາຄາ ໃນຂັ້ນຂອງຕົນຄຸ້ມຄອງ;

6. ກຳນົດລາຄາ ແລະ ປະກາດລາຄາ ຊື້-ຂາຍ ໃນຂອດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;

7. ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ຕິດຕາມ ກວດກາ ການເໜັງຕີງລາຄາ ສິນຄ້າ ແລະ ຄ່າບໍລິການຕາມລາຍໃນຂັ້ນຂອງຕົນຄຸ້ມຄອງ;

8. ຮັບພິຈາລະນາ ແກ້ໄຂຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

9. ຕິດຕາມ, ກວດກາ ສະຖານທີ່, ຕຶກອາຄານ ທີ່ມີສ່ວນພົວພັນກັບ ການຜະລິດ, ການປຸງແຕ່ງ, ສາງເກັບມ້ຽນ, ສະຖານທີ່ຈຳໜ່າຍ ແລະ ສະຖານທີ່ບໍລິການ;

10. ນຳໃຊ້ມາດຕະການທາງບໍລິການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

11. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຊີ້ນຳ-ນຳພາ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລາຄາ ໃນຂັ້ນຂອງຕົນຄຸ້ມຄອງ;

12. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ**

ການຄຸ້ມຄອງວຽກງານລາຄາ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

2. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ໃນຄວາມຮັບຜິດຊອບຂອງຕົນ;

3. ຕິດຕາມ ກວດກາ ການເໜັງຕີງລາຄາ ສິນຄ້າ ແລະ ຄ່າບໍລິການ ຕາມລາຍການຄວບຄຸມລາຄາ ແລະ ຕິດຕາມການເໜັງຕີງລາຄາ;

4. ຮັບພິຈາລະນາ ແກ້ໄຂຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຄຸ້ມຄອງລາຄາ ໃນຂອບເຂດຂອງຕົນ;

5. ຕິດຕາມ, ກວດກາ ສະຖານທີ່, ຕຶກອາຄານ ທີ່ມີສ່ວນພົວພັນກັບ ການຜະລິດ, ການປຸງແຕ່ງ, ສາງເກັບມ້ຽນ, ສະຖານທີ່ຈຳໜ່າຍ ແລະ ສະຖານທີ່ບໍລິການ ໃນຂອບເຂດຂອງຕົນ;

6. ນຳໃຊ້ມາດຕະການທາງບໍລິການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

7. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຊີ້ນຳ-ນຳພາ, ຊຸກຍູ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລາຄາ ໃນຂັ້ນຂອງຕົນຄຸ້ມຄອງ;

8. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານລາຄາ ສິນຄ້າ ແລະ ຄ່າບໍລິການ ບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໂຄສະນາ ເຜີຍແຜ່ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງລາຄາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ນຳໃຊ້ມາດຕະການທາງບໍລິຫານ ຕໍ່ຜູ້ດຳເນີນທຸລະກິດ ທີ່ລະເມີດກົດໝາຍ ແລະ ລະບຽບການ. ນອກຈາກນີ້ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

2. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

3. ຊີ້ນຳ, ນຳພາ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລາຄາ ໃນສາຍຕັ້ງຂອງຕົນ;

4. ຄົ້ນຄວ້າ, ວິເຄາະ ແລະ ກຳນົດລາຍການຄວບຄຸມລາຄາ ແລະ ຕິດຕາມການເໜັງຕີງລາຄາ ໃນແຕ່ລະໄລຍະ ຂອງຕົນ;

5. ກຳນົດ, ກວດກາ ແລະ ພິຈາລະນາຮັບຮອງ ໂຄງປະກອບລາຄາ ຮ່ວມກັບຂະແໜງອຸດສາຫະກຳ ແລະ ການຄ້າ ພ້ອມທັງ ກຳນົດລາຄາ ແລະ ປະກາດລາຄາ ຊື້-ຂາຍ;

6. ຄົ້ນຄວ້າ, ວິເຄາະ, ວິໄຈ, ຕິດຕາມກວດກາ ການເໜັງຕີງລາຄາ ສິນຄ້າ ແລະ ຄ່າບໍລິການ;

7. ຮັບພິຈາລະນາ ແກ້ໄຂຄຳຮ້ອງທຸກ ຫຼື ຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

8. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິ ບັດວຽກງານຄຸ້ມຄອງລາຄາ;

9. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການກວດກາ ວຽກງານລາຄາ ສິນຄ້າ ແລະ ຄ່າບໍລິການ

### ມາດຕາ 26 ອົງການກວດກາ

ອົງການກວດກາ ວຽກງານຄຸ້ມຄອງລາຄາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງລາຄາ ທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

### ມາດຕາ 27 ເນື້ອໃນການກວດກາ

ການກວດກາ ວຽກງານຄຸ້ມຄອງລາຄາ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

2. ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

3. ການເຄື່ອນໄຫວວຽກງານ ຂອງອົງການຄຸ້ມຄອງວຽກງານຄຸ້ມຄອງລາຄາ ແລະ ພະນັກງານລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ການດຳເນີນທຸລະກິດ ກ່ຽວກັບ ວຽກງານຄຸ້ມຄອງລາຄາ;

5. ເນື້ອໃນອື່ນທີ່ກ່ຽວຂ້ອງ.

### ມາດຕາ 28 ຮູບການກວດກາ

ການກວດກາມີ ສາມ ຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ສາມາດແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ, ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

# ພາກທີ VI

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ,ນິຕິບຸກຄົນຫຼືການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ-ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 31 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງລາຄາ ສິນຄ້າ ແລະ ຄ່າບໍລິການ ເປັນຕົ້ນ ຂໍ້ຫ້າມ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ທີ່ມີລັກສະນະເບົາບາງ ແລະ ເປັນການລະເມີດຄັ້ງທໍາອິດ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 32 ມາດຕະການທາງວິໄນ**

ພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດກ່ຽວຂ້ອງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມຊຶ່ງບໍ່ເປັນການກະທໍາຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ, ບໍ່ມີຄວາມຈິງໃຈລາຍງານ ແລະ ຫຼົບຫຼີກຈາກຄວາມຜິດ ຈະຖືກປະຕິບັດວິໄນຕາມກົດໝາຍ ວ່າດ້ວຍພະນັກງານ ແລະ ລັດຖະກອນ, ກົດໝາຍ ແລະ ລະ ບຽບການທີ່ກ່ຽວຂ້ອງ.

**ມາດຕາ 33 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງລາຄາ ພາຍຫຼັງທີ່ໄດ້ຮັບການກ່າວເຕືອນ ແລະ ສຶກສາອົບຮົມມາແລ້ວ, ແຕ່ຍັງສືບລະເມີດ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ມີພຶດຕິກໍາ ໂດຍເຈດຕະນາ ຊຶ່ງເຮັດໃຫ້ລາຄາຕໍ່າ ຫຼື ສູງເກີນຄວນ ຫຼື ເຮັດໃຫ້ເກີດຄວາມ ປັ່ນປ່ວນໃນສັງຄົມ ຈະຖືກປັບໃໝແຕ່ 5. 000.000 ກີບ ຫາ 10.000.000 ກີບ/ ຄັ້ງ/ລາຍການ;
2. ບໍ່ສະແດງ, ຕິດ ຫຼື ປະກາດປ້າຍລາຄາ ຈະຖືກປັບໃໝແຕ່ 500.000 ກີບ ຫາ 1.000.000 ກີບ/ ຄັ້ງ/ລາຍການ;
3. ສະແດງ, ຕິດ, ປະກາດ ຫຼື ໂຄສະນາ ລາຄາ ສິນຄ້າ ແລະ ຄ່າບໍລິການ ເປັນເງິນຕາຕ່າງປະເທດ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 20.000.000 ກີບ/ຄັ້ງ/ລາຍການ;

4. ສວຍໂອກາດຂຶ້ນລາຄາ ໃນເວລາທີ່ເກີດເຫດໄພພິບັດ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ຫຼື ໃນເວລາທີ່ມີສະພາບການຫຍຸ້ງຍາກເກີດຂຶ້ນ ໃນທ້ອງຖິ່ນໃດໜຶ່ງ ຈະຖືກປັບໃໝແຕ່ 3,000,000 ກີບ ຫາ 10,000,000 ກີບ (ມາດຕາ 277 ປະມວນກົດໝາຍອາຍາ ປີ 2017);
5. ກັກຕຸນສິນຄ້າ ທີ່ນອນໃນລາຍການຄວບຄຸມລາຄາ ໂດຍມີສິນຄ້າດັ່ງກ່າວໄວ້ໃນຄອບຄອງ ເກີນປະລິມານ ທີ່ອົງການຄຸ້ມຄອງລາຄາໄດ້ກຳນົດໄວ້ ຈະຖືກປັບໃໝແຕ່ 5. 000.000 ກີບ ຫາ 10.000.000 ກີບ/ ຄັ້ງ/ລາຍການ;
6. ບຸກຄົນໃດ ທີ່ໄດ້ກັກຕຸນສິນຄ້າ, ຊຸກເຊື່ອງສິນຄ້າ ໃນລາຍການຄວບຄຸມລາຄາ ໄວ້ໃນວິສາຫະກິດ, ບໍລິສັດ, ຫ້າງຮ້ານຂອງຕົນ ຫຼື ຢູ່ບ່ອນອື່ນ ເພື່ອສ້າງຄວາມປັ່ນປ່ວນທາງດ້ານເສດຖະກິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ຈະຖືກປັບໃໝແຕ່ 10,000,000 ກີບ ຫາ 50,000,000 ກີບ (ມາດຕາ 278 ປະມວນກົດໝາຍອາຍາ ປີ 2017);
7. ເກັບມ້ຽນສິນຄ້າໄວ້ໃນຄັງແຮສຳຮອງອື່ນ ນອກຈາກຄັງແຮສຳຮອງ ທີ່ໄດ້ລາຍງານຕໍ່ອົງການຄຸ້ມຄອງລາຄາ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ລາຍການ;
8. ນຳເອົາສິນຄ້າ ທີ່ຢູ່ໃນລາຍການຄວບຄຸມລາຄາ ທີ່ມີໄວ້ນັ້ນອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ ລາຍການ;
9. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈຳໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນໃນ ເມື່ອມີຄຳສັ່ງຈາກອົງການຄຸ້ມຄອງລາຄາ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ ລາຍການ;
10. ແຈ້ງຂໍ້ມູນເທັດ ກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 10.000.000 ກີບ/ຄັ້ງ/ລາຍການ;
11. ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ 5.000.000 ກີບ ຫາ 10.000.000 ກີບ/ຄັ້ງ/ ລາຍການ;
12. ນຳໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 5.000.000 ກີບ/ຄັ້ງ/ລາຍການ.

**ມາດຕາ 34 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຫ້າມ ໃນກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍຕ່າງໆ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 35 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທໍາຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍອາຍາ ຫຼື ປະມວນກົດໝາຍອາຍາ.

**ມາດຕາ 36 ມາດຕະການໂທດເພີ່ມ**

ນອກຈາກມາດຕະການຕໍ່ຜູ້ລະເມີດກົດໝາຍ ທີ່ໄດ້ກໍານົດໄວ້ໃນມາດຕາ 30 ຂອງກົດໝາຍສະບັບນີ້ ຜູ້ກະທໍາຜິດ ຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເຊັ່ນ: ການໂຈະ ຫຼື ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດຕ່າງໆ, ຮິບວັດຖຸສິ່ງຂອງ ຫຼື ຜົນກໍາໄລ ທີ່ພົວພັນກັບການກະທໍາຜິດ.

## ພາກທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 38 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ............. ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ລົງຈົດໝາຍເຫດທາງລັດຖະການ.

**ປະທານສະພາແຫ່ງຊາດ**